LIBRARIES
UNIVERSITY OF WISCONSIN–MADISON

# Peace talks (Royal Lao Government and Neo Lao Hak Xat). 1973-02

[s.l.]: [s.n.], 1973-02

https://digital.library.wisc.edu/1711.dl/JGE6ZSFWB5V6X8K

This material may be protected by copyright law (Title 17, US Code).

For information on re-use see:
http://digital.library.wisc.edu/1711.dl/Copyright

The libraries provide public access to a wide range of material, including online exhibits, digitized collections, archival finding aids, our catalog, online articles, and a growing range of materials in many media.

When possible, we provide rights information in catalog records, finding aids, and other metadata that accompanies collections or items. However, it is always the user's obligation to evaluate copyright and rights issues in light of their own use.

728 State Street | Madison, Wisconsin 53706 | library.wisc.edu

donthi    175 ahm 3-2-73
3 FEB 1973

# ບ ົ ດ ປ ະ ກ ອ ບ ຄ ຳ ເ ຫັ ນ

ຂອງ ທ່ານ ເຈົ້າສຸກ ວົງສັກ, ຮອງຫົວໜ້າ ຄະນະຜູ້ແທນ ບັນດາກຳລັງຮັກຊາດລາວ,
ກ່າວໃນວາລະປະຊຸມ ເທື່ອທີ ໑໗, ວັນທີ ໓/໒/໑໙໗໓.

---

ບັນດາທ່ານ,

ພວກເຮົາໄດ້ປະຊຸມກັນມາຮອດດຽວນີ້ ລວມທັງໝົດ ເປັນ ໑໗ ຄັ້ງກັບເທື່ອນີ້ ພາຍໃນກຳນົດເວລາ ເກືອບ ໔ ເດືອນ. ຈຸດປະສົງຂອງກອງປະຊຸມພວກເຮົາ ແມ່ນແນ່ໃສ່ ຢຸດເຊົາການແຊກແຊງ ຮຸກຮານ ຂອງ ຈັກກະພັດອາເມ ລິກາຢູ່ໃນລາວ ເພື່ອໃຫ້ປະເທດລາວເຮົາ ມີສັນຕິພາບ, ເອກະລາດ, ເປັນກາງ, ປະຊາທິປະໄຕ, ເອກະພາບ ແລະ ວັດທະນາຖາວອນ. ວິທີແກ້ໄຂ ບັນຫາລາວທີ່ທັງສອງຝ່າຍພວກເຮົາ ເອົາເປັນພື້ນຖານ ແຫ່ງການປຶກສາຫາລືກັນນັ້ນ ແມ່ນວິທີການ ການເມືອງ ໕ ຂໍ້ ທີ່ແນວລາວຮັກຊາດ ໄດ້ປະກາດອອກ ໃນວັນທີ ໖/໓/໑໙໗໐. ໃນວາລະປະຊຸມຄັ້ງ ທີໜຶ່ງ ເມື່ອວັນທີ ໑໗/໑໐/໑໙໗໒, ຄະນະຜູ້ແທນ ບັນດາກຳລັງຮັກຊາດ ກໍ່ໄດ້ສະເໜີ ແລະ ຊີ້ແຈງວິທີການ ການ ເມືອງ ໕ ຂໍ້ນີ້ ຢ່າງລະອຽດ ແລະ ໄດ້ຈັກຊວນຝ່າຍພວກທ່ານ ພ້ອມກັນປຶກສາຫາລືກັນ ເຂົ້າເນື້ອໃນ ເພື່ອໄປເຖິງບ່ອນ ຕົກລົງກັນໄດ້ ກ່ຽວກັບການຢຸດຍິງ ແລະ ບັນດາບັນຫາການເມືອງ ເພື່ອຮັບປະກັນການ ຟື້ນຟູ ສັນຕິພາບ ແລະ ປະຕິບັດ ຄວາມຖືກຕ້ອງປອງດອງຊາດ. ຢູ່ໃນການພົບປະວົງແຄບ ຫວ່າງມໍ່ໆມານີ້, ຝ່າຍພວກຂ້າພະເຈົ້າ ໄດ້ເຈລະຈາ ກັບ ພວກທ່ານ ຢ່າງຈິງໃຈ ແລະ ເຄັ່ງຂຶມ, ແລະ ໃນວັນທີ ໓/໒ ນີ້ຮອງ ທ່ານ ພູມີ ວົງວິຈິດ ທີ່ປຶກສາພິເສດ ຂອງຄະ ນະຜູ້ແທນ ພວກຂ້າພະເຈົ້າ ທັງເປັນຕົວແທນ ຜູ້ມີອຳນາດເຕັມ ຂອງສະເດັດເຈົ້າ ສຸພານຸວົງ ປະທານ ຄະນະກຳມະ ການ ສູນກາງແນວລາວຮັກຊາດ ກໍ່ໄດ້ກັບມາວຽງຈັນເພີ່ມອີກເທື່ອໜຶ່ງ ເພື່ອຊຸກຍູ້ ການແກ້ໄຂ ບັນຫາລາວ ໂດຍສັນຕິວິ ທີ ໃຫ້ໄວເຂົ້າຕື່ມອີກ. ອັນນີ້ ກໍ່ເປັນສັນຍາລັກອັນໜຶ່ງ ທີ່ສະແດງເຖິງຄວາມຈິງໃຈ ຂອງຝ່າຍພວກຂ້າພະເຈົ້າ ທີ່ ຢາກແກ້ໄຂບັນຫາລາວ ໂດຍສັນຕິວິທີ ໃຫ້ໄດ້ແທ້ໆ. ແຕ່ພວກຂ້າພະເຈົ້າ ຍັງສັງເກດເຫັນວ່າ ຝ່າຍພວກທ່ານ ຈຳພັດ ຍັງບໍ່ຕັ້ງໃຈ ປຶກສາຫາລືຢ່າງເຄັ່ງຂຶມແທ້ຈິງ ກັບພວກຂ້າພະເຈົ້າ ກ່ຽວກັບ ເນື້ອແທ້ ຂອງວິທີການແກ້ໄຂ ບັນຫາລາວ ແລະ ບໍ່ທັນຕອບສະໜອງ ຂໍ້ສະເໜີ ອັນຖືກຕ້ອງ ແລະ ສົມເຫດສົມຜົນ ຂອງພວກຂ້າພະເຈົ້າ ຢູ່ໃນການພົບປະວົງແຄບ ນີ້ ຢ່າງຕັ້ງໜ້າ ແລະ ຈະແຈ້ງ.

ໃນຂະນະດຽວກັນນັ້ນ, ພວກທ່ານຊ້ຳສົມຮູ້ ເປັນໃຈປ່ອຍໃຫ້ ອາເມລິກາ ເພີ່ມທະວີສົງຄາມຮຸກຮານລາວ ຂຶ້ນ ອີກໃຫຍ່. ຫຼັກຖານຕົວຈິງ ກໍ່ຄື ໃນເວລາພົບປະກັບ ນາຍພົນ ແຮກ ແລະ ຮອງປະທານາທິບໍດີ ອັກນິວ ຂອງອາເມລິກາ ນີ້, ວົງການທະຫານ ຝ່າຍວຽງຈັນ ໄດ້ມີການປຶກສາຫາລືກັນ ຢ່າງຊຸ່ມຊ່ອນ ກ່ຽວກັບ ແຜນການເຄື່ອນໄຫວ ທາງດ້ານ ການທະຫານ ຢູ່ສະໜາມຮົບຕ່າງໆ ໃນລາວ. ເຮືອບິນ ຍຸດທະສາດ ບີ-໕໒ ກໍ່ໄດ້ເພີ່ມທະວີການຖິ້ມລະເບີດ ຢ່າງຮ້າຍ ກາດ ແລະ ປ່າເຖື່ອນ ລົງໃນເຂດ ທົ່ງໄຫຫີນ, ແລະ ຊຽງຂວາງ. ເຮືອບິນສູ້ຮົບ ຂອງກອງທັບອາກາດ ອາເມລິກາ ທີ່ບິນຈາກດິນໄທ, ແລະ ຈາກ ກອງທັບເຮືອ ອາເມລິກາ ກໍ່ເຕົ້າໂຮມກັນ ມາຖິ້ມລະເບີດຍິງທຳລາຍ ລ້າງຜານແຜ່ນດິນ ລາວ ຢ່າງຮ້າຍແຮງ ເພີ່ມຂຶ້ນເລື້ອຍໆ. ພ້ອມກັນນັ້ນ ທະຫານໄທກໍ່ຫຼັ່ງໄຫຼເຂົ້າລາວ ເປັນຈຳນວນຫຼວງຫຼາຍ, ເປັນການ ເພີ່ມຈຳນວນ ກຳລັງປະຈັນບານ ຂອງ "ທິດສະດີ ນິກສັນ" ໃຫ້ຫຼາຍຂຶ້ນ. ອັນນີ້ ເປັນການໜີບເຕັງ ແລະ ຊູ່ຂວັນທາງ

ທາງດ້ານທະຫານ ຂອງອາເມລິກາ ແລະ ຝ່າຍວຽງຈັນ ຕໍ່ບັນດາກຳລັງຮັກຊາດໂດຍກົງ. ທັງເປັນການປ່ອຍໃຫ້ພວກກຳອຳນາດ ປະຕິການໄທ ສວຍໂອກາດ ຟື້ນຟູ "ລັດທິໄທໃຫຍ່" ຂອງພວກເຂົາ ຢູ່ໃນລາວຄືນໃໝ່.

ແຕ່ວ່າ ບັນດາການກະທຳ ທີ່ເປັນການເພີ່ມທະວີສົງຄາມດັ່ງກ່າວນັ້ນ ມັນບໍ່ສາມາດຈະເຮັດໃຫ້ ສະຖານະການ ແລະ ກົດເກນ ແຫ່ງການປະລາໄຊ ຂອງອາເມລິກາ ຢູ່ສະໜາມຮົບ ໃນອິນດູຈີນ ແລະ ໃນລາວ ປ່ຽນແປງໄປໄດ້ຢ່າງເດັດຂາດ, ອາເມລິກາ ແລະ ລູກມືຍິ່ງແກ່ດຶງສົງຄາມ ທີ່ບໍ່ມີຄວາມຫວັງນັ້ນ ໃຫ້ຍືດຍາວໄປເທົ່າໃດ, ພວກເຂົາກໍຍິ່ງຈະຖືກປະລາໄຊໜັກກ່ວາເກົ່າຂຶ້ນຕື່ມອີກເທົ່ານັ້ນ.

ສະພາບການ ຂອງອິນດູຈີນ ແລະ ຂອງປະເທດເຮົາ ໄດ້ມີການຫັນປ່ຽນ ມານັບນັ້ນຢ່າງຈະແຈ້ງດີ ຈັກກະພັດອາເມລິກາ ຜູ້ຮຸກຮານ ໄດ້ປະລາໄຊ ແລະ ຈຳຕ້ອງຢຸດເຊົາສົງຄາມຮຸກຮານ ຂອງເຂົາ ແລະ ຈຳຕ້ອງຖອນໜີ ອອກຈາກຫວຽດນາມ ແລະ ອິນດູຈີນ. ສະພາບການອັນນີ້ ມັນສິ່ງພົນສະທ້ອນອັນດີ ມາໃຫ້ພວກເຮົາແກ້ໄຂ ບັນຫາລາວເຮົາ ສະດວກຂຶ້ນກ່ວາເກົ່າ. ດັ່ງນັ້ນ ພວກຂ້າພະເຈົ້າຈຶ່ງເຫັນວ່າ ຝ່າຍພວກທ່ານ ກໍຄວນສະແດງຄວາມຈິງໃຈ ເພື່ອແກ້ໄຂບັນຫາລາວ ຕາມທີ່ພວກທ່ານເຄີຍເວົ້າ ນັ້ນອອກມາໃຫ້ເຫັນ ໃນຕົວຈິງ ໂດຍຮ່ວມກັບຝ່າຍພວກຂ້າພະເຈົ້າ ພ້ອມກັນເປີກສາພິຈາລະນາ ແລະ ຕົກລົງບັນດາຂໍ້ຫຍໍ້ງໄວ້ ໃນຂໍ້ສະເໜີຕ່າງໆ ຂອງຝ່າຍພວກຂ້າພະເຈົ້າ, ເພາະວ່າ ປະຕິບັດບັນດາຂໍ້ດັ່ງກ່າວນັ້ນຢ່າງຖືກຕ້ອງ ແລະ ຄົບຖ້ວນ ມັນຈະເຮັດໃຫ້ ມີການຢຸດເຊົາສົງຄາມ ໃນປະເທດເຮົາຢ່າງມີການຮັບປະກັນ ແລະ ຢ່າງໝັ້ນຄົງ ຖາວອນ, ໃຫ້ທຸກບັນຫາການເມືອງທີ່ກ່ຽວກັບ ສິດພື້ນຖານແຫ່ງຊາດ ຂອງລາວເຮົາມີການ ຮັບປະກັນດັ່ງດຽວກັນ.

ສິ່ງທີ່ພວກຂ້າພະເຈົ້າບໍ່ເຫັນດີນຳ ພວກທ່ານ ແມ່ນການທີ່ພວກທ່ານບໍ່ທຸ້ມສຸດ ກຳລັງຂອງຕົນ ໃສ່ໃນການເຮັດໃຫ້ ການເຈລະຈາ ຂອງພວກເຮົາ ດຳເນີນໄປຢ່າງວ່ອງໄວ ຕາມຄວາມມຸ່ງມາດ ປາຖະໜາ ຂອງປະຊາຊົນລາວທັງຊາດ. ການທີ່ຄະນະຜູ້ແທນ ຂອງພວກທ່ານ ບໍ່ມາຮ່ວມກອງປະຊຸມ ຢ່າງຄົບຖ້ວນ, ເປັນຕົ້ນ ແມ່ນຫົວໜ້າ ແລະ ຮອງ, ໄດ້ເຮັດໃຫ້ ການເປີກສາຫາລືກັນ ຖືກແກ່ດຶງຍືດຍາວ ແລະ ຕົກລົງກັນບໍ່ໄດ້, ນັ້ນແມ່ນຕົ້ນເຫດອັນໜຶ່ງຕື່ມອີກ ທີ່ເຮັດໃຫ້ ກອງປະຊຸມ ຂອງພວກເຮົາຊັກຊ້າ ມາເຖິງປະຈຸບັນນີ້.

ພວກເຮົາທີ່ເປັນຄົນລາວດ້ວຍກັນ ແລະ ທີ່ມີຄວາມຮັບຜິດຊອບ ຕໍ່ໂຊກຊາຕາຂອງຊາດ, ພວກເຮົາຄວນຮີບຮ້ອນ ບັນຫາໃຫ້ທັນການ ແລະ ຮີບກອບກູ້ເອົາ ປະເທດຊາດ ອັນແສນຮັກ ຂອງພວກເຮົາ ອອກຈາກສົງຄາມຮຸກຮານ ຂອງອາເມລິກາ ທີ່ໄດ້ຍືດເຍື້ອມາເຖິງ ໑໐ ກວ່າປີແລ້ວນັ້ນໃຫ້ທັນເວລາ.

ດ້ວຍເຫດນັ້ນ, ໃນເມື່ອສະພາບການໃໝ່ ຂອງໂລກ ທີ່ພວມອຳນວຍຄວາມສະດວກໃຫ້ພວກເຮົາແນວນັ້ນ ພວກຂ້າພະເຈົ້າ ຮຽກຮ້ອງໃຫ້ຝ່າຍພວກທ່ານ ຈົ່ງຈິງໃຈ ເປີກສາຫາລືກັນຢ່າງເຄັ່ງຂຶ້ນ, ດ້ວຍນ້ຳໃຈ ຢາກສ້າງຄວາມຖືກຕ້ອງປອງດອງຊາດ ຢ່າງແທ້ຈິງ, ຫຼີກເວັ້ນທຸກທ່າທີ ແລະ ຄວາມເວົ້າທີ່ຈະເພີ່ມທະວີ ຄວາມລະແວງສົງໄສກັນ, ກໍ່ສ້າງສະພາບການແຫ່ງຄວາມຮັກແພງ ເຂົ້າໃຈເຊິ່ງກັນ ແລະ ກັນ ເຮັດໃຫ້ການເຈລະຈາ ຂອງພວກເຮົາ ກ້າວໜ້າໄປເຖິງຜົນສຳເລັດ ຢ່າງວ່ອງໄວ ແລະ ມີການຮັບປະກັນ.

ຄວາມຮຽກຮ້ອງຕ້ອງການ ຂອງບ້ານເມືອງ ແລະ ປະຊາຊົນເຮົາດຽວນີ້ ແມ່ນຢາກໃຫ້ ສິດພື້ນຖານແຫ່ງຊາດ ຂອງຕົນເຊັ່ນ: ເອກະລາດ, ອຳນາດອະທິປະໄຕ, ເອກະພາບ ແລະ ພື້ນແຜ່ນດິນອັນຄົບຖ້ວນ ມີການເຄົາລົບນັບຖື,

ໃຫ້ບັນຫາລາວ ໄດ້ຮັບການແກ້ໄຂ ບົນພື້ນຖານ ຂອງສັນຍາເຊີແນວປີ ໑໙໖໒ ແລະ ສະພາບການຕົວຈິງປະຈຸບັນຂອງລາວ, ໃຫ້ສິດເສລີພາບ ປະຊາທິປະໄຕ ຂອງປະຊາຊົນ ມີການຮັບປະກັນ, ໃຫ້ການແຊກແຊງຮຸກຮານ ຂອງຈັກກະພັດອາເມລິກາ ແລະ ລູກມື ຢຸດເຊົາລົງ, ໃຫ້ການຮົບຣາຂ້າຟັນ ລະຫວ່າງຄົນລາວດ້ວຍກັນ ໄດ້ຢຸດເຊົາຢ່າງຖາວອນ ແລະ ໃຫ້ການຈັບກຸມຄຸມຂັງ ໄດ້ງົດເຊົາ ເພື່ອໃຫ້ທຸກຄົນໄດ້ກັບຄືນໄປ ທຳມາຫາກິນຢູ່ໃນບ້ານເກີດຂອງຕົນ ຕາມປົກກະຕິ.

ການສ້າງຕັ້ງລັດຖະບານປະສົມຊົ່ວຄາວ ແຫ່ງຊາດຊຸດໃໝ່ ແລະ ການສ້າງຕັ້ງສະພາປະສົມການເມືອງ ທີ່ຝ່າຍ ບັນດາກຳລັງຮັກຊາດໄດ້ສະເໜີໄປນັ້ນ ເປັນວິທີການອັນດຽວ ທີ່ຈະເຮັດໃຫ້ການສ້າງຄວາມຖືກຕ້ອງປອງດອງຊາດ ເປັນໄປຢ່າງຖາວອນ ແລະ ຖືກຕ້ອງກັບສິດປະໂຫຍດ ຂອງປະຊາຊົນລາວເຮົາທຸກຄົນ, ມັນຈະຮັບປະກັນໃຫ້ການຢຸດຍິງ ເປັນອັນຖາວອນ ແລະ ເຮັດໃຫ້ຄົນລາວທຸກຄົນ ຫັນໜ້າເຂົ້າຫາກັນ, ຈິງໃຈຮັກແພງກັນ ແລະ ຊ່ວຍເຫຼືອ ຮັບປະກັນ ສິດປະໂຫຍດ ທັງໝົດໃຫ້ແກ່ກັນ.

ດັ່ງນັ້ນ ພວກຂ້າພະເຈົ້າ ຈຶ່ງຂໍເຊີນຊວນ ຝ່າຍພວກທ່ານຕື່ມອີກເທື່ອໜຶ່ງ ຈົ່ງຈິງໃຈແກ້ໄຂບັນຫາລາວ ໂດຍສັນຕິວິທີແທ້, ພ້ອມກັນກັບພວກຂ້າພະເຈົ້າ ເປີກສາຫາລື ບັນດາບັນຫາທີ່ກ່າວຂ້າງເທິງນີ້ ຢ່າງເອົາໃຈໃສ່ ແລະ ຮີບຮ້ອນ ເພື່ອໃຫ້ ໄປເຖິງບ່ອນຕົກລົງກັນໄດ້ໄວ ແລະ ຄົບຖ້ວນ ຖືກຕ້ອງຕາມ ພະລາຊະປະສົງ ຂອງສົມເດັດ ພະເຈົ້າມະຫາຊີວິດ ແລະ ຄວາມມຸ່ງມາດປາຖະໜາ ຂອງປະຊາຊົນລາວໝົດທັງຊາດ ທີ່ຫວັງຢາກເຫັນ ປະເທດຊາດມີ ສັນຕິພາບ, ເອກະລາດ, ເປັນກາງ, ປະຊາທິປະໄຕ, ເອກະພາບ ແລະ ວັດທະນາຖາວອນ; ບໍ່ດັ່ງນັ້ນ ການເຈລະຈາ ຂອງພວກເຮົາ ແລະ ສົງຄາມຮຸກຮານອັນປ່າເຖື່ອນ ຢູ່ໃນປະເທດເຮົາ ກໍ່ຈະຖືກແກ່ດຶງຍືດຍາວ ເຮັດໃຫ້ພີ່ນ້ອງຮ່ວມຊາດພວກເຮົາ ຖືກຍາດຈັບ ລົ້ມຕາຍ ເສຍຫາຍຕໍ່ໄປອີກ ເຊິ່ງບໍ່ເປັນສິ່ງເພິ່ງປາຖະໜາ ຂອງປວງປະຊາຊົນເຮົາທັງຊາດ.